# ສົມໂພດພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ
# ວັນອາທິດທີ 29 ພຶດສະພາ 2022



**ພຣະວໍລະສານໂດຍນັກບຸນລູກາ 24, 46-53**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວແກ່ພວກອັກຄະສາວົກວ່າ: "ດັ່ງນີ້ໄດ້ມີຄຳຂຽນໄວ້ວ່າ ພຣະກຣິສໂຕເຈົ້າຈະຕ້ອງໄດ້ຮັບທໍຣະມານ ແລະຈະກັບເປັນຄືນມາຈາກພວກຜູ້ຕາຍໃນວັນທີສາມ, ແລະເດຊະພຣະນາມຂອງພຣະອົງ, ການເປັນທຸກກັບໃຈ ແລະການຍົກບາບຈະຕ້ອງຖືກປະກາດແກ່ນານາຊາດ, ໃຫ້ເລີ່ມຕົ້ນແຕ່ນະຄອນເຢຣູຊາແລມກ່ອນ. ພວກເຈົ້າເປັນພິຍານໃນຂໍ້ທີ່ເປັນມາແລ້ວນີ້. ສ່ວນເຮົາ, ເຮົາກຳລັງຈະສົ່ງພຣະຈິດທີ່ພຣະບິດາໄດ້ຊົງສັນຍາໄວ້ລົງມາໃນພວກເຈົ້າ; ແຕ່ສ່ວນພວກເຈົ້າ, ໃຫ້ຄອຍຖ້າຢູ່ໃນກຸງເຢຣູຊາແລມຈົນກວ່າຈະໄດ້ທົ່ງພະລະກຳລັງຈາກເບື້ອງບົນ." ແລ້ວພຣະອົງຊົງພາພວກເຂົາອອກຈາກເມືອງໄປເຖິງບ້ານເບທານີ ແລະພຣະອົງຊົງຍົກພຣະຫັດຂຶ້ນອວຍພອນໃຫ້ພວກເຂົາ, ເວລາກຳລັງອວຍພອນໃຫ້ພວກເຂົາຢູ່ນັ້ນ, ພຣະອົງຊົງຫຍັບອອກຈາກພວກເຂົາແລະຖືກຍົກຂຶ້ນສູ່ສະຫວັນ. ສ່ວນພວກເຂົານັ້ນ ກໍຂາບໄຫວ້ພຣະອົງ ແລ້ວກັບຄືນສູ່ກຸງເຢລູຊາແລມດ້ວຍຄວາມຊື່ນຊົມອັນຍິ່ງໃຫຍ່. ແລະພວກເຂົາຢູ່ໃນພຣະວິຫານຕະຫລອດເວລາພ້ອມກັນຍົກຍໍສໍລະເສີນພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນແມ່ນສີ່ສິບວັນຫລັງຈາກວັນປາສກາ. ເປັນຄັ້ງສຸດທ້າຍທີ່ພຣະເຢຊູເຈົ້າພົບພໍ້ກັບພວກລູກສິດຫລັງຈາກວັນທີ່ພຣະອົງກັບເປັນຄືນມາຈາກຄວາມຕາຍ. ການທີ່ພຣະເຢຊູເຈົ້າກັບຄືນເມືອຫາພຣະບິດາເຈົ້ານີ້ບໍ່ແມ່ນພຣະອົງປະໃຫ້ພວກລູກສິດຕ້ອງຢູ່ຜູ້ດຽວ, ແຕ່ພຣະອົງໄປເພື່ອຕຽມບ່ອນໃຫ້ພວກເຂົາແລະໃຫ້ພວກເຮົາທຸກຄົນໃນເຮືອນຂອງພຣະບິດາ. ພຣະອົງບໍ່ໄດ້ສະເດັດໄປເລີຍ, ແຕ່ພຣະອົງຊົງສັນຍາວ່າຈະສົ່ງພຣະຈິດຂອງພຣະອົງລົງມາຢູ່ກັບພວກລູກສິດເຖິງວັນສິ້ນໂລກ. ດ້ວຍເຫດນີ້, ສິບວັນຫລັງຈາກວັນພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ, ພຣະກຣິສຕະຈັກຈຶ່ງສົມໂພດພຣະຈິດເຈົ້າສະເດັດລົງມາ.

ໃນພຣະວໍລະສານໂດຍນັກບຸນມັກໂກ, ພຣະເຢຊູເຈົ້າໄດ້ສະເດັດຂຶ້ນສະຫວັນຫລັງຈາກທີ່ພຣະອົງໄດ້ກັບເປັນຄືນມາແລະປະຈັກມາຫາພວກລູກສິດສິບເອັດຄົນແລະໄດ້ສົ່ງພວກເຂົາໄປປະກາດຂ່າວດີເຖິງການກັບເປັນຄືນມາຂອງພຣະອົງ. ເມື່ອກ່າວແລ້ວ, ພຣະອົງກໍສະເດັດຂຶ້ນສະຫວັນ.

ສ່ວນໃນພຣະວໍລະສານໂດຍນັກບຸນລູກາຊຶ່ງພວກເຮົາໄດ້ຟັງວັນນີ້, ການສະເດັດຂຶ້ນສະຫວັນຂອງພຣະເຢຊູເຈົ້າແມ່ນຢູ່ຕອນທ້າຍຂອງພຣະວໍລະສານແລະຢູ່ຕອນຕົ້ນຂອງໜັງສືກິດຈະການຂອງພວກອັກຄະທຳມະທູດ. ຍ້ອນຫຍັງ? ຍ້ອນນັກບຸນລູກາຢາກຍົກໃຫ້ພວກເຮົາເຫັນເຖິງການສືບຕໍ່ພາລະກິດຂອງພຣະເຢຊູເຈົ້າຢູ່ໃນແຜ່ນດິນນີ້ຈາກພວກອັກຄະສາວົກ. ເພາະຫລັງຈາກທີ່ພຣະເຢຊູເຈົ້າໄດ້ສຳເລັດພາລະກິດການໄຖ່ກູ້ຂອງພຣະອົງຢູ່ໃນໂລກນີ້ແລ້ວ, ພຣະອົງກໍສະເດັດຄືນເມືອຫາພຣະບິດາ. ສ່ວນພວກອັກຄະສາວົກແມ່ນຜູ້ຊຶ່ງໄດ້ຮັບມອບໝາຍຈາກພຣະເຢຊູເຈົ້າໃຫ້ສືບຕໍ່ພາລະກິດຂອງພຣະອົງດ້ວຍການເປັນພິຍານເຖິງສິ່ງທີ່ພວກເຂົາໄດ້ຍິນແລະໄດ້ເຫັນໃຫ້ກັບທຸກຄົນແລະທົ່ວທຸກມູມໂລກ, ເພື່ອໃຫ້ທຸກຄົນໄດ້ຮູ້ຈັກເຖິງຂ່າວດີຂອງພຣະອົງແລະໄດ້ຮັບຊີວິດນິລັນດອນ.

ສ່ວນພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າ, ພວກເຮົາໄດ້ສືບຕໍ່ພາລະກິດການປະກາດຂ່າວດີຂອງພຣະອົງໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ເປັນພິຍານເຖິງພຣະອົງຜ່ານທາງວຽກງານດີງາມໃນຊີວິດຂອງພວກເຮົາບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໃນວັນທີ່ພຣະອົງສະເດັດຄືນເມືອຫາພຣະບິດາ ໂຜດຊ່ວຍລູກໃຫ້ມີຄວາມປາດຖະໜາສິ່ງທີ່ເປັນຂອງສະຫວັນຜ່ານທາງການດຳລົງຊີວິດຕາມຄຳສອນແລະວາຈາຂອງພຣະອົງ. ເພື່ອວັນໜຶ່ງເມື່ອລູກຈາກໂລກນີ້ໄປແລ້ວ, ລູກຈະໄດ້ຂຶ້ນສະຫວັນຮ່ວມສຸກກັບພຣະອົງແລະບັນດານັກບຸນທັງຫລາຍດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕອນ ກຽດຕິສັກ